ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ປິດໂຄງການ "ການເງິນຈຸລະພາກໃນຂົງເຂດຊົນນະບົດ-ການເຂົ້າເຖິງແຫຼ່ງທຶນ ຂອງຜູ້ທຸກຍາກ'' MRA-AFP




ໃນຕອນບ່າຍຂອງວັນທີ 8 ເມສາ 2022 ທີ່ຜ່ານມາ ທະນາຄານແຫ່ງ ສປປລາວ (ທຫລ) ໄດ້ຈັດພິທີປິດໂຄງການ "ການເງິນຈຸລະພາກໃນຂົງເຂດຊົນນະບົດ-ການເຂົ້າເຖິງແຫຼ່ງທຶນຂອງຜູ້ທຸກຍາກ'' MRA-AFP ຢູ່ທີ່ໂຮງແຮມ ລາວພລາຊາ, ນະຄອນຫຼວງວຽງຈັນ  ເປັນກຽດເຂົ້າຮ່ວມ ແລະ ກ່າວປິດໂຄງການ ໂດຍແມ່ນ ທ່ານ ພຸດທະໄຊ ສີວິໄລ ຮອງຜູ້ວ່າການ ທຫລ, ທ່ານ ແດນ ແຮນເດີນ Dan Heldon, ຮອງເອກອັກຄະລັກຖະທູດ ອົດສະຕຣາລີ ປະຈໍາ ສປປ ລາວ , ທ່ານນາງກຣິສຕີນາ ຊີເບີດ-ເອເວີແຟນChristinaSeeberg-Elverfeldt, ຫົວໜ້າການຮ່ວມມືທາງເສດຖະກິດ, ສະຖານທູດສະຫະພັນ ເຢຍລະມັນ ປະຈໍາ ສປປ ລາວ ພ້ອມນີ້ກໍ່ມີຜູ້ຕາງໜ້າຈາກອໍານາດການປົກຄອງຂັ້ນສູນກາງ ແລະ ທ້ອງຖິ່ນ, ບັນດາກະຊວງພ້ອມດ້ວຍຊ່ຽວຊານໂຄງການ ແລະ ພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມ.

ໂຄງການ"ການເງິນຈຸລະພາກໃນຂົງເຂດຊົນນະບົດ-ການເຂົ້າເຖິງແຫຼ່ງທຶນຂອງຜູ້ທຸກຍາກ'' MRA-AFP ເປັນໂຄງການສືບເນື່ອງຈາກໂຄງການ AFP ຊຶ່ງໄດ້ລິເລີ່ມມາແຕ່ປີ 2009 ພາຍໃຕ້ການຮ່ວມມືຂອງລັດຖະບານແຫ່ງ ສປປ

ລາວ ແລະ ລັດຖະບານ ສ.ສ ເຢຍລະມັນ ໂດຍແມ່ນອົງການ ICFW ເປັນຜູ້ສະໜອງທຶນ. ຈາກນັ້ນໄລຍະ II ໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ແລະ ຄູ່ຮ່ວມພັດທະນາ; ມາຮອດປະຈຸບັນແມ່ນການຈັດຕັ້ງປະຕິບັດໂຄງການ ໃນໄລຍະທີ V (2019-2021).



ການຈັດຕັ້ງປະຕິບັດໂຄງການດັ່ງກ່າວປະກອບສ່ວນໃນການແກ້ໄຂຄວາມທຸກຍາກ ແລະ ນຳເອົາການບໍລິການທາງດ້ານການເງິນໄປສູ່ປະຊາຊົນທີ່ຂາດໂອກາດຢູ່ເຂດຊົນນະບົດ, ປະກອບສ່ວນເຂົ້າໃນການປະຕິບັດເປົ້າໝາຍສະຫັດສະວັດ ທີ່ລັດຖະບານໄດ້ຮັບຮອງໃນຂົງເຂດການເຂົ້າຫາການບໍລິການທາງດ້ານການເງິນ ເຊິ່ງໂຄງການດັ່ງກ່າວໄດ້ຈັດຕັ້ງປະຕິບັດໃນສາມລະດັບ ຄື: (1) ລະດັບມະຫາພາກ (Macro level) ແມ່ນສຸມໃສ່ສະໜັບສະໜູນ ທະນາຄານແຫ່ງ ສປປ ລາວ ໃນການສ້າງສະພາບແວດລ້ອມທາງນິຕິກຳທີ່ເອື້ອຍອຳນວຍແກ່ການເງິນຈຸລະພາກດ້ານວິຊາການ. (2) ລະດັບກາງ (Meso level) ແມ່ນສ້າງອົງການສະໜັບສະໜູນເຄືອຂ່າຍ (NSO) ເພື່ອເປັນຂົວຕໍ່ລະຫວ່າງຂັ້ນມະຫາພາກ ແລະ ຂັ້ນຈຸລະພາກ ເປັນອົງການທີ່ຄວບຄຸມການບໍລິຫານທຶນຊ່ວຍທະນາຄານບ້ານ, ການສະໜອງການຝຶກອົບຮົມໃນນັ້ນແມ່ນໄດ້ເນັ້ນເລື່ອງຄວາມຮູ້ພື້ນຖານທາງດ້ານການເງິນ (financial literacy) ໃຫ້ແກ່ປະຊາຊົນ (3) ລະດັບຈຸລະພາກ (Micro level) ແມ່ນການຂະຫຍາຍທະນາຄານບ້ານເພື່ອໃຫ້ປະຊາຊົນໄດ້ຮັບການບໍລິການທາງດ້ານການເງິນ.

ທ່ານ ພຸດທະໄຊ ສີວິໄລ ຮອງຜູ້ວ່າການ ທຫລ ໄດ້ກ່າວວ່າ: ການຈັດຕັ້ງປະຕິບັດໂຄງການດັ່ງກ່າວໃນໄລຍະຜ່ານມາ ເຫັນວ່າສາມາດປະຕິບັດໂຄງການ ໄລຍະ I-IV ໄດ້ຢ່າງມີປະສິດທິຜົນ ບັນລຸໄດ້ເປົ້າໝາຍຂອງໂຄງການທີ່ວາງໄວ້; ສຳລັບກອງປະຊຸມໃນມື້ນີ້ ພວກເຮົາຈະໄດ້ພ້ອມກັນປະເມີນຜົນການຈັດຕັ້ງປະຕິບັດໂຄງການ ພ້ອມນັ້ນກໍ່ ຖອດຖອນບົດຮຽນ, ແລກປ່ຽນຄຳຄິດເຫັນ ແລະ ກຳນົດແຜນການເຄື່ອນໄຫວໃນຕໍ່ໜ້າ ເພື່ອສືບຕໍ່ໂຄງການດັ່ງກ່າວ ພາຍໃຕ້ການຮ່ວມມືລະຫວ່າງ ທຫລ, ສະມາຄົມການເງິນຈຸລະພາກ ແລະ ອົງການຮ່ວມມືຂອງທະນາຄານອອມສິນເຢຍລະ

ມັນ (DSIK) ເພື່ອໃຫ້ລະບົບ NSO-ທະນາຄານບ້ານ ມີຄວາມຍືນຍົງທາງດ້ານການເງິນ ແລະ ສືບຕໍ່ບໍລິການປະຊາຊົນ ໃນການເຂົ້າເຖິງແຫຼ່ງທຶນ.




# ພາບ-ຂ່າວ: ສົມອົກ ເຄນຄຳແພງ

# ໃຊ້ເງິນກີບ ທົ່ວທັງຊາດ ສ້າງບົດບາດຄ່າເງິນ